ຮຽນ ບັນດາຫົວໜ່ວຍທຸຫະກິດບໍລິການອາຫານໃນ Seattle ທີ່ຮັກແພງ,

ນີ້ແມ່ນຂໍ້ມູນອັບເດດຈາກ **Seattle Public Utilities (SPU)** ພ້ອມດ້ວຍຂໍ້ກຳນົດດ້ານການບໍລິການອາຫານໃໝ່. **Seattle Public Utilities** ໄດ້ປັບປຸງກົດລະບຽບຂອງຜູ້ອຳນວຍການ ສະບັບເລກທີ **SW-500** ວ່າດ້ວຍ: "ຂໍ້ກຳນົດ ແລະ ຂໍ້ຍົກເວັ້ນຊົ່ວຄາວ ຕໍ່ ພາຊະ ນະການບໍລິການອາຫານ ແລະ ຜະລິດຕະພັນສຳລັບການຫຸ້ມຫໍ່." ກົດລະບຽບສະບັບປັບປຸງໃໝ່ ໄດ້ມີຜົນບັງຄັບໃຊ້ແລ້ວໃນວັນທີ **1** ກໍລະກົດ **2023.**

ພາຍໃຕ້ກົດລະບຽບສະບັບປັບປຸງໃໝ່:

- ພາຊະນະການບໍລິການອາຫານທັງໝົດ ແມ່ນຕ້ອງສາມາດນຳມາໃຊ້ຄືນໄດ້, ສາມາດຣີໄຊເຄີນໄດ້ ຫຼື ສາມາດຍ່ອຍສະຫຼາຍໄດ້, ໂດຍມີຂໍ້ຍົກເວັ້ນທີ່ຈຳກັດ ທີ່ໃຫ້ອະນຸຍາດພາຍໃຕ້ການຍົກເວັ້ນຊົ່ວຄາວ.
- ຖ້ວຍແບ່ງສ່ວນສຳລັບອາຫານຮ້ອນ ຫຼື ຝາປິດ ແມ່ນບໍ່ມີເງື່ອນໄຂໄດ້ຮັບການຍົກເວັ້ນຊົ່ວຄາວຈາກຂໍ້ກຳນົດສະບັບເລກທີ (Seattle Municipal Code) SMC 21.36.086. ຖ້ວຍແບ່ງສວ່ນແບບໃຊ້ຄັ້ງດຽວແລ້ວຖິ້ມ ທີ່ມີເສັ້ນຜ່າສູນກາງນ້ອຍກວ່າ 3 ນີ້ວຕ້ອງເປັນຖ້ວຍທີ່ສາມາດຍ່ອຍສະຫຼາຍໄດ້.
- ກ່ອງບັນຈຸອາຫານທີ່ເຮັດດ້ວຍເຈ້ຍສີນ້ຳຕານ ແມ່ນອະນຸຍາດໃຫ້ໃນກໍລະນີທີ່ເປັນກ່ອງທີ່ສາມາດຍ່ອຍສະຫຼາຍໄດ້ເທົ່ານັ້ນ.
- ພາຊະນະບໍລິການອາຫານແບບໃຊ້ຄັ້ງດຽວແລ້ວຖິ້ມ ທີ່ໃຊ້ສຳລັບອາຫານທີ່ບໍລິໂພກຢູ່ໃນສະຖານທີ່ຕ່າງໆຕ້ອງເປັນພາຊະນະທີ່ ສາມາດຍ່ອຍສະຫຼາຍໄດ້.
- ພາຊະນະບໍລິການອາຫານທີ່ສາມາດຍ່ອຍສະຫຼາຍໄດ້ ຕ້ອງບັນລຸໃຫ້ໄດ້ຕາມຂໍ້ກຳນົດຂອງ (Revised Code of Washington) RCW ພາກທີ 70A.455, ວ່າດ້ວຍ "ຄວາມສາມາດໃນການຍ່ອຍສະຫຼາຍຂອງຂອງຜະລິດຕະພັນປລາສະຕິກ". ພາຍໃຕ້ກົດໝາຍສະບັບນີ້, ຜະລິດ ຕະພັນທີ່ສາມາດຍ່ອຍສະຫຼາຍໄດ້ ຈະຕ້ອງ:
    - ໄດ້ຮັບການຢັ້ງຢືນຮັບຮອງວ່າສາມາດຍ່ອຍສະຫຼາຍໄດ້ຈາກພາກສ່ວນທີສາມ ຫຼື ເຮັດດ້ວຍໄມ້ ຫຼື ເສັ້ນໄຍທັງໝົດ ໂດຍບໍ່ ມີການເຄືອບປລາສະຕິກ.
    - ມີຄວາມພ້ອມ ແລະ ສາມາດລະບຸໄດ້ຢ່າງງ່າຍດາຍວ່າ ສາມາດຍ່ອຍສະຫຼາຍໄດ້, ລວມທັງການສະແດງຄຳວ່າ "ສາມາດຍ່ອຍສະຫຼາຍໄດ້" ແລະ ມີການຕິດສະຫຼາກ ແລະ ສີທີ່ບັນລຸໄດ້ຕາມມາດຕະຖານຂອງອຸດສາຫະກຳ.

  ລາຍລະອຽດຕ່າງໆ ກ່ຽວກັບຂໍ້ກຳນົດຕ່າງໆພາຍໃຕ້ກົດໝາຍສະບັບນີ້ແມ່ນມີໃຫ້ຢູ່ທີ່ນີ້ (https://apps.ecology.wa.gov/publications/documents/2307022.pdf).
- ຕ້ອງຈັດຫາພາຊະນະເສີມໃນການບໍລິການອາຫານທີ່ໃຊ້ໄດ້ເທື່ອດຽວແລ້ວຖິ້ມ ໂດຍສອດຄ່ອງກັບຂໍ້ກຳນົດຂອງ RCW ພາກທີ 70A.245.080, ວ່າດ້ວຍ "ອຸປະກອນການບໍລິການທາງເລືອກ". ພາຍໃຕ້ກົດໝາຍຂອງລັດສະບັບນີ້, ເຄື່ອງໃຊ້ໃນຄົວ, ທໍ່ດູດ, ບັນຈຸພັນເຄື່ອງປຸງ ແລະ ຝາປິດຖ້ວຍ ສຳລັບເຄື່ອງດື່ມເຢັນ ອາດຈະສະໜອງໃຫ້ໄດ້ ເມື່ອມີການຮ້ອງຂໍຈາກລູກຄ້າ ຫຼື ໂດຍການໃຊ້ຖັງ ຫຼື ເຄື່ອງຈ່າຍແບບບໍລິການຕົນເອງເທົ່ານັ້ນ.
  ລາຍລະອຽດຕ່າງໆ ກ່ຽວກັບຂໍ້ກຳນົດພາຍໃຕ້ກົດໝາຍສະບັບນີ້ ແມ່ນມີຢູ່ທີ່ນີ້ (ecy.wa.gov/serviceware).

ບັນດາຫົວໜ່ວຍທຸລະກິດການບໍລິການອາຫານ ໄດ້ຮັບການຊຸກຍູ້ໃຫ້:

- ມີການຈັດຫາທໍ່ດູດປລາສະຕິກທີ່ສາມາດຍ່ອຍສະຫຼາຍໄດ້ທີ່ໂຄ້ງງໍໄດ້ ຫຼື ທໍ່ດູດປລາສະຕິກແບບໃຊ້ຄັ້ງດຽວແລ້ວຖິ້ມທີ່ໂຄ້ງງໍໄດ້ຢ່າງພຽງພໍ ເພື່ອສະໜອງໃຫ້ລູກຄ້າຕາມການຮ້ອງຂໍເມື່ອມີຄວາມຈຳເປັນ ເນື່ອງຈາກສະພາບທາງການແພດ ຫຼື ຮ່າງກາຍ ແລະ
- ສະໜອງພາຊະນະບໍລິການອາຫານ ແລະ ເຄື່ອງໃຊ້ໃນຄົວທີ່ທົນທານ, ສາມາດນຳມາໃຊ້ຄືນໄດ້ ສຳລັບອາຫານທີ່ບໍລິໂພກຢູ່ໃນສະຖານ ທີ່ຕ່າງໆ ທຸກຄັ້ງທີ່ເປັນໄປໄດ້.

ພວກເຮົາໄດ້ຄັດຕິດໃບປິວທີ່ມີຂໍ້ມູນເພີ່ມເຕີມກ່ຽວກັບຂໍ້ກຳນົດສຳລັບບັນດາຫົວໜ້ວຍທຸລະກິດບໍລິການອາຫານ.

ເພື່ອເບິ່ງບັນຊີລາຍຊື່ສະບັບເຕັມຂອງຂໍ້ກຳນົດດ້ານພາຊະນະບໍລິການອາຫານ, ກະລຸນາເຂົ້າເບິ່ງເວັບໄຊຂອງພວກເຮົາ: bit.ly/spu-food-packaging

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບໂຄງການບັນຈຸພັນສຳລັບອາຫານຂອງ Seattle, ລວມທັງແຫຼ່ງຊັບພະຍາກອນ ແລະ ການຊ່ວຍເຫຼືອ ດ້ານເຕັກນິກແບບບໍ່ເສຍຄ່າ, ກະລຸນາຕິດຕໍ່ເບີ 206-343-8505 ຫຼື ຕອບຜ່ານທາງອີເມວທີ່ greenbusiness@seattle.gov.

ດ້ວຍຄວາມຮັກແພງ,

ໂຄງການທຸລະກິດສີຂຽວ ຂອງ Seattle Public Utilities
206-343-8505
GreenBusiness@seattle.gov